

# 2 ຄວາມສຳຄັນການຊ່ວຍເຫຼືອຕັ້ງແຕ່ເບື້ອງຕົ້ນ

ໃນຊ່ວງອາຍຸຕອນຕົ້ນຂອງຊີວິດ, ເດັກນ້ອຍທຸກຄົນລວມທັງເດັກທີ່ຫູໜວກ ຫຼື ບໍ່ສາມາດຮັບຟັງໄດ້ດີນັ້ນ ແມ່ນຈະຮຽນຮູ້ຫຼາຍທັກສະ ແລະ ຮຽນຮູ້ສິ່ງຕ່າງໆໄດ້ໄວ ແລະ ງ່າຍດາຍກວ່າໄລຍະອື່ນໆ ຂອງຊີວິດພວກເຂົາ. ການພັດທະນາທາງດ້ານຮ່າງກາຍແມ່ນສາມາດສັງເກດເຫັນໄດ້ງ່າຍເຊັ່ນ: ທຳອິດພວກເຂົາຈະຄານ, ຕໍ່ມາພວກເຂົາກໍ່ຈະເລີ່ມຍ່າງ ແລະ ແລ່ນ.

ເດັກຍັງໄດ້ເລີ່ມມີການພັດທະນາທາງດ້ານຈິດໃຈນັບຕັ້ງແຕ່ທີ່ພວກເຂົາໄດ້ເກີດຂຶ້ນມາ. ສະໝອງຂອງເດັກປຽບເໝືອນດັ່ງຟອງນ້ຳທີ່ມີຄວາມອາດສາມາດໃນການດູດຊຶມ ແລະ ຮຽນຮູ້ສິ່ງໃໝ່ໆ. ໃນໄລຍະອາຍຸເລີ່ມຕົ້ນນັ້ນ, ເດັກຜູ້ທີ່ເປັນປົກກະຕິນັ້ນ ສາມາດຮຽນພາສາໄດ້ຢ່າງວ່ອງໄວ ເຊິ່ງໄດ້ສະແດງອອກເຖິງການພັດທະນາທາງດ້ານພາສາ ແລະ ການສື່ສານຂອງພວກເຂົາ. ພ້ອມກັນນັ້ນຄວາມສາມາດໃນການຄົ້ນຄິດຂອງພວກເຂົາກໍ່ຂະຫຍາຍໂຕເຊັ່ນດຽວກັນ. ດັ່ງນັ້ນ. ມັນເປັນສິ່ງສຳຄັນສຳລັບຜູ້ທີ່ເປັນພໍ່ແມ່ ໃນການຊ່ວຍເຫຼືອເດັກຜູ້ທີ່ຫູໜວກ ຫຼື ບໍ່ສາມາດທີ່ຈະຮັບຟັງໄດ້ດີນັ້ນ ໃນການຮຽນພາສາໄວເທົ່າທີ່ຈະເປັນໄປໄດ້. ສຳລັບເດັກທີ່ພິການທາງຫູ ຫຼື ຫູຕຶງ ນອກຈາກ ການຮຽນຮູ້ທາງດ້ານພາສາແລ້ວ, ພວກເຂົາຍັງສາມາດພັດທະນາຄວາມສາມາດທາງດ້ານຈິດໃຈຂອງພວກເຂົາອີກດ້ວຍ.






# ວິທີທີ່ເດັກພັດທະນາບັນດາທັກສະໃໝ່

ເດັກທຸກຄົນມີການພັດທະນາຢູ່ 4 ຂົງເຂດຕົ້ນຕໍຄື: ທາງດ້ານຮ່າງກາຍ ຫຼື ລຳຕົວ, ທາງດ້ານຈິດໃຈ ຫຼື ການຄົ້ນຄິດ, ທາງດ້ານສັງຄົມ ຫຼື ການປັບຕົວເຂົ້າກັບຄົນອື່ນ ແລະ ທາງດ້ານການສື່ສານ. ໃນແຕ່ລະຂົງເຂດເດັກຈະໄດ້ຮຽນກ່ຽວກັບທັກສະໃໝ່ໄປເທື່ອລະກ້າວ.

**ຕົວຢ່າງ:** ກ່ອນທີ່ເດັກຄົນໜຶ່ງຈະສາມາດຮຽນຍ່າງໄດ້ນັ້ນ, ເຂົາຕ້ອງຮຽນຮູ້ການຄວບຄຸມໂຕໃນທ່າຕ່າງໆເສຍກ່ອນ.

ການພັດທະນາໃນທຸກຂົງເຂດນັ້ນ, ແຕ່ລະທັກສະໃໝ່ໆ ທີ່ເດັກໄດ້ຮຽນຮູ້ແມ່ນສ້າງຂຶ້ນບົນພື້ນຖານຂອງທັກສະທີ່ເຂົາໄດ້ຮຽນຮູ້ຜ່ານມາແລ້ວ ໝາຍຄວາມວ່າທັກສະດັ່ງກ່າວໄດ້ເປັນການເອື້ອອຳນວຍໃຫ້ຮຽນຮູ້ທັກສະໃໝ່ອື່ນໆ, ທີ່ຍາກຂຶ້ນກວ່າເກົ່າ.

ເມື່ອເດັກບໍ່ໄດ້ຮຽນຮູ້ທັກສະໃດທັກສະໜຶ່ງທີ່ເປັນພື້ນຖານແລ້ວ, ເຂົາກໍ່ບໍ່ສາມາດຮຽນຮູ້ທັກສະອື່ນໆໃນຂັ້ນຕໍ່ໄປໄດ້. ຕົວຢ່າງ: ເຂົາຫາກມີບັນຫາໃນການຍົກຄໍຂອງເຂົາຂຶ້ນ, ເດັກຄົນນັ້ນກໍ່ຈະມີຄວາມຫຍຸ້ງຍາກຫຼາຍໃນການຮຽນທັກສະໃນການນັ່ງ ຫຼື ຄານໃນຂັ້ນຕໍ່ໄປ. ສະນັ້ນ, ໃນຂັ້ນຕອນການຍົກຫົວຂຶ້ນນັ້ນ ຈຶ່ງມີຄວາມສຳຄັນຫຼາຍ.



**1** *ກ່ອນອື່ນ, ເຂົາຈະພະຍາຍາມຍົກຫົວຂອງເຂົາຂຶ້ນ ແລະ ເຄື່ອນຍ້າຍຂາ ແລະ ມື.*



**2** *ຕໍ່ມາເດັກຈະສາມາດໃຊ້ແຂນ ແລະ ຂາຂອງເຂົາຄ້ຳໂຕຂຶ້ນມານັ່ງໄດ້.*



**3** *ໃນຂະນະທີ່ເຂົານັ່ງຢູ່ນັ້ນ, ເຂົາຈະສາມາດຈັບບາຍ ແລະ ໝູນຕົວໄປມາໄດ້ ເຊິ່ງໄດ້ເປັນການພັດທະນາທາງດ້ານການຮັກສາຄວາມດຸ່ນດ່ຽງຂອງເຂົາ.*



**4** *ການຄານນັ້ນຈະຊ່ວຍໃຫ້ເຂົາຮຽນຮູ້ ການປະສານງານລະຫວ່າງແຂນ ແລະ ຂາຂອງເຂົາ.*



**5** *ຕໍ່ຈາກນັ້ນ ເຂົາກໍ່ຈະພະຍາຍາມດຶງຕົວເຂົາໃຫ້ຢູ່ໃນທ່າຢືນ.*



*ທັກສະໃໝ່ໆ ແຕ່ລະທັກສະນັ້ນແມ່ນເກີດຂຶ້ນບົນພື້ນຖານຂອງທັກສະທີ່ໄດ້ຮຽນຮູ້ມາແລ້ວ, ເຊັ່ນດຽວກັບການກອງດິນຈີ່ຂຶ້ນນັ້ນເອງ.*

## ທັກສະການສື່ສານ ແລະ ພາສາຂອງເດັກ ແມ່ນໄດ້ມີການພັດທະນາໄປເທື່ອລະຂັ້ນ

ການພັດທະນາທາງດ້ານພາສາຂອງເດັກ ແມ່ນເປັນໄປໃນທິດທາງດຽວກັນກັບການພັດທະນາທາງດ້ານຮ່າງກາຍຂອງເດັກ. ກ່ອນອື່ນພວກເຂົາຈະຮຽນຮູ້ທັກສະທີ່ງ່າຍດາຍ ແລະ ທຳມະດາເສຍກ່ອນ.




**1** *ເດັກທາລົກ ເລີ່ມທີ່ຈະສະແດງຄວາມຄິດ, ຄວາມຕ້ອງການ ແລະ ຄວາມຮູ້ສຶກຂອງຕົນເອງອອກມາໂດຍການສົ່ງສຽງ ຫຼື ສະແດງສີໜ້າ ແລະ ຊີ້ມື.*




**2** *ພວກເຂົາໄດ້ຍິນ ແລະ ເຂົ້າໃຈຄຳເວົ້າຂອງຄົນອື່ນ.*




**3** *ພວກເຂົາເລີ່ມໃຊ້ຄຳສັບ. ເຊິ່ງສະແດງອອກພວກເຂົາມັກເອີ້ນ ຊື່ຄົນ ແລະ ມັກໃກ້ສິດກັບພວກເຂົາ.*




**4** *ຕໍ່ຈາກນັ້ນພວກເຂົາ ກໍ່ຈະເລີ່ມເວົ້າ ແລະ ສະແດງຄວາມເປັນຕົວຂອງເຂົາຫຼາຍຂຶ້ນ.*




**5** *ຄຳເວົ້າຈະຊ່ວຍໃຫ້ພວກເຂົາມີການຄົ້ນຄິດ ແລະ ຮຽນຮູ້ສິ່ງໃໝ່ໆ.*

# ການຮຽນຮູ້ພາສາ

ເມື່ອທ່ານທາກຖືກໂອບລ້ອມດ້ວຍພາສາຄຳເວົ້າ, ມັນກໍ່ເປັນສິ່ງທີ່ງ່າຍດາຍໃນການຮຽນຮູ້ພາສາທີ່ຄົນຢູ່ໃນຊຸມຊົນນັ້ນເວົ້າກັນ, ເດັກຈະມີການຮຽນຮູ້ພາສາໃນຕອນທີ່ ພວກເຂົາໄດ້ຟັງຄົນອື່ນນັ້ນໂອ້ລົມກັນ ແລະ ສັງເກດເບິ່ງວ່າ ມີຫຍັງເກີດຂຶ້ນ, ໃນຕອນທີ່ພວກເຂົາໄດ້ເວົ້າກັບຄົນອື່ນ. ພາສາໄດ້ກາຍເປັນວິທີສຳລັບພວກເຂົາໃນການທຳຄວາມເຂົ້າໃຈກ່ຽວກັບປະສົບການຂອງພວກເຂົາເອງ ແລະ ໂລກທີ່ຢູ່ອ້ອມຕົວຂອງເຂົາ ນັ້ນມີການເຄື່ອນໄຫວຄືແນວໃດ.

## • ການຮຽນຮູ້ພາສາເວົ້າແມ່ນຍາກສຳລັບເດັກທີ່ພິການທາງຫູ




ເດັກທີ່ບໍ່ສາມາດຮັບຟັງໄດ້ດີພໍປານໃດນັ້ນ, ພວກເຂົາອາດຈະມີຄວາມຫຍຸ້ງຍາກໃນການທຳຄວາມເຂົ້າໃຈກັບພາສາຄຳເວົ້າທີ່ງ່າຍດາຍ ແລະເດັກກໍ່ຕ້ອງຮຽນຮູ້ບັນດາຄຳເວົ້າທີ່ງ່າຍດາຍຫຼາຍໆຄຳ ເພື່ອທີ່ຈະຮຽນຮູ້ພາສາໃນຂັ້ນຕໍ່ໄປ.

ເມື່ອພວກເຂົາຮຽນຮູ້ຄຳສັບຫຼາຍຂື້ນ, ພວກເຂົາກໍ່ສາມາດຮຽນຮູ້ທັກສະການສື່ສານທີ່ກ້າວໜ້າຂື້ນເຊັ່ນ: ເວົ້າເປັນປະໂຫຍກ ຫຼື ລິມເປັນບົດສົນທະນາ. ເດັກຜູ້ທີ່ພິການທາງຫູ ຫຼື ບໍ່ສາມາດຮັບຟັງໄດ້ດີນັ້ນແມ່ນຕ້ອງການຄວາມຊ່ວຍເຫຼືອໃນການຮຽນຮູ້ທັກສະຕ່າງໆ ເຊັ່ນ: ການເວົ້າຄຳເວົ້າທີ່ງ່າຍດາຍ ຫຼື ການເຮັດສິ່ງໃດສິ່ງໜຶ່ງຕາມບົດສົນທະນາທີ່ງ່າຍດາຍ ເຊັ່ນ: ການປ່ຽນຜຽນກັນ.

## • ການຮຽນຮູ້ພາສາຂອງເດັກໄດ້ຈັດເປັນລະດັບຂັ້ນຕອນດີ:






## • ແຕ່ຖ້າຫາກຂາດຂັ້ນຕອນທຳອິດຂອງການທີ່ໄດ້ຍິນ ຫຼື ການທຳຄວາມເຂົ້າໃຈແລ້ວ...





ເດັກຄົນນັ້ນ ກໍ່ຈະບໍ່ສາມາດຮຽນຮູ້ພາສາໄດ້, ສະນັ້ນ ເຂົາກໍ່ບໍ່ສາມາດທີ່ຈະພັດທະນາການຄົ້ນຄິດ ຫຼື ການສື່ສານຂອງເຂົາໄດ້. ລາວກໍ່ບໍ່ມີຫົນທາງໃດທີ່ຈະກາຍເປັນສ່ວນໜຶ່ງຂອງສັງຄົມ ແລະ ກໍ່ຈະຖືກປະປ່ອຍໃຫ້ຢູ່ຢ່າງໂດດດ່ຽວ.




*ເພາະວ່າ ລາວຮູ້ຄຳສັບວ່າ "ໃຫ່ຍກວ່າ ຫຼື ນ້ອຍກວ່າ, ຄຳຫຼ້າ ກໍ່ສາມາດຮຽນຮູ້ ປຽບທຽບຂະໜາດໄດ້, ຖ້າ ຫາກວ່ານາງບໍ່ຮູ້ພາສາ. ລາວ ເອງກໍ່ບໍ່ສາມາດຮຽນຮູ້ສິ່ງ ດັ່ງກ່າວນັ້ນໄດ້.*




*ເພາະວ່າ ນາງຮູ້ຄຳສັບ ໃນການຈັດລຽງເຫດ ການ ຫຼື ສິ່ງຂອງ, ນາງ ນວນຕາ ກໍ່ສາມາດ ວາງແຜນໄດ້.*

# ພາສາຊ່ວຍການພັດທະນາທາງດ້ານຈິດໃຈແນວໃດ

ພາສາສາມາດເຮັດໃຫ້ເດັກມີການຄົ້ນຄິດ, ວາງ ແຜນ ແລະ ເຂົ້າໃຈໂລກທີ່ຢູ່ອ້ອມຕົວເຂົາໄດ້ ແລະ ເຂົາ ກໍ່ຈະກາຍເປັນພາກສ່ວນໜຶ່ງຂອງຊຸມຊົນ. ຖ້າຫາກປາ ສະຈາກພາສາແລ້ວ, ເດັກກໍ່ບໍ່ສາມາດພັດທະນາທາງ ດ້ານຈິດໃຈໄດ້.

ເມື່ອເດັກບໍ່ສາມາດຮັບຮູ້ທາງຫູໄດ້ ແລະ ບໍ່ໄດ້ຮັບ ການຊ່ວຍເຫຼືອໃນການຮຽນພາສາ ເພື່ອການສື່ສານ ນັ້ນ. ພວກເຂົາກໍ່ຈະປະເຊີນໜ້າກັບບັນຫາການພັດ ທະນາທາງດ້ານຈິດໃຈຂອງພວກເຂົາເອງ. ພໍ່ແມ່ ຫຼາຍໆຄົນ ທີ່ມີລູກພິການທາງຫູ ຫຼື ສູນເສຍການຟັງ ໄປແລ້ວນັ້ນມີຄວາມດີໃຈຫຼາຍແລ້ວ ຖ້າລູກຂອງພວກ ເຂົາຫາກຮຽນເວົ້າຄຳສັບທີ່ງ່າຍດາຍສອງສາມຄຳ ຫຼື ໃຊ້ພາສາມື, ແຕ່ຕ້ອງການຫຼາຍກວ່ານີ້, ຄືພວກເຂົາ ຕ້ອງການທີ່ຈະຮຽນພາສາ.

ເດັກທີ່ພິການທາງຫູແມ່ນມີຄວາມຕ້ອງການຮຽນພາ ສາຕັ້ງແຕ່ຕອນຕົ້ນ, ເພື່ອທີ່ເຂົາຈະສາມາດໃຊ້ພາສາດັ່ງ ກ່າວນັ້ນ ເວົ້າກັບຕົວຂອງເຂົາເອງ, ຄົ້ນຄິດ ແລະ ສະ ແດງແນວຄວາມຄິດຂອງພວກເຂົາໂດຍການເວົ້າເປັນ ຄຳສັບອອກມາ ເຊິ່ງເຮັດໃຫ້ມັນມີຄວາມເປັນໄປໄດ້ທີ່ຈະ ມີການຄົ້ນຄິດກ່ຽວກັບແນວຄວາມຄິດເຫຼົ່ານັ້ນ.

ເດັກຍັງຕ້ອງການຮຽນພາສາເພື່ອສະແດງແນວ ຄວາມຄິດຂອງເຂົາຕໍ່ກັບຜູ້ອື່ນ ຫຼື ບອກຄົນອື່ນວ່າ ເຂົາ ຕ້ອງການຫຍັງ ຫຼື ຢາກໄດ້ສິ່ງໃດ. ເຂົາຍັງຕ້ອງການ ຮຽນພາສາ ເພື່ອໃຫ້ເຂົ້າໃຈເຖິງການອະທິບາຍ, ຕະ ຫຼອດເຖິງສາມາດສື່ສານກັບຄົນອື່ນໄດ້, ເຂົາຈະຮຽນຮູ້ ເຖິງໂລກທີ່ຢູ່ອ້ອມຕົວເຂົາ. ສິ່ງເຫຼົ່ານີ້ຈະຊ່ວຍໃຫ້ຈິດໃຈ ຂອງເດັກໄດ້ຮັບການພັດທະນາ ແລະ ເຮັດໃຫ້ເຂົາສ້າງ ສາຍພົວພັນກັບຄົນອື່ນໄດ້.



*ຖ້າຫາກບໍ່ຮູ້ພາສາ ເດັກຈະບໍ່ຮູ້ ວ່າ ຍ້ອນສາເຫດໃດເຂົາຈຶ່ງຕ້ອງ ຢູ່ຫ່າງໄກຈາກສິ່ງທີ່ເປັນອັນຕະ ລາຍ. ທ້າວ ຄຳສີ ບໍ່ສາມາດຮູ້ວ່າ ຍ້ອນສາເຫດໃດ ພວກເຂົາຈຶ່ງ ຕ້ອງປິດປາກນໍ້າສ້າງ.*




*ຖ້າຫາກວ່າ ແມ່ຂອງ ບົວລອຍບໍ່ອະທິບາຍ ໃຫ້ຟັງ, ນາງບົວລອຍ ກໍ່ຈະບໍ່ເຂົ້າໃຈວ່າ ແມ່ ຂອງລາວຮູ້ໄດ້ແນວໃດ ວ່າມີຄົນຢູ່ໜ້າປະຕູ.*

# ເດັກທີ່ພິການທາງຫູແມ່ນຕ້ອງການຄວາມຊ່ວຍເຫຼືອຕັ້ງແຕ່ເບື້ອງຕົ້ນ

ຖ້າໄດ້ຮັບການຊ່ວຍເຫຼືອແລ້ວ, ເດັກທີ່ພິການທາງຫູນັ້ນ ກໍ່ສາມາດສື່ສານ ແລະ ຮຽນຮູ້ພາສາໄດ້. ເດັກທາລົກໄດ້ເລີ່ມຮຽນຮູ້ຕັ້ງແຕ່ເຂົາໄດ້ມືນຕາເບິ່ງໂລກເປັນຄັ້ງທຳອິດພຸ້ນ. ສະນັ້ນ ມັນສຳຄັນຫຼາຍທີ່ຄອບຄົວຈະເອົາໃຈໃສ່ເປັນພິເສດຕໍ່ການສື່ສານຂອງລູກ ເພື່ອຊ່ວຍເຫຼືອລູກຜູ້ທີ່ພິການທາງຫູນັ້ນໃຫ້ໄວເທົ່າທີ່ຈະເປັນໄປໄດ້. ຖ້າຫາກເດັກຜູ້ທີ່ບໍ່ສາມາດຮັບຟັງໄດ້ດີນັ້ນ ໄດ້ຮັບການຊ່ວຍເຫຼືອໃນການຮຽນພາສາ ເຊິ່ງພາສາດັ່ງກ່າວນັ້ນ ອາດຈະເປັນພາສາສັນຍະລັກ. ພວກເຂົາກໍ່ຈະສາ







ມາດເຂົ້າໃຈ ແລະ ສື່ສານກັບຄົນທີ່ຢູ່ອ້ອມຕົວພວກເຂົາໄດ້, ຕໍ່ຈາກນັ້ນ ພວກເຂົາກໍ່ຈະສາມາດຮຽນຮູ້ສິ່ງຕ່າງໆຄືກັນກັບເດັກປົກກະຕິທົ່ວໄປ.

ຖ້າຫາກບັນຫາການຮັບຮູ້ຂອງເດັກ ໄດ້ຖືກສັງເກດເຫັນຕັ້ງແຕ່ເລີ່ມຕົ້ນ ແລະ ໄດ້ຮັບການຊ່ວຍເຫຼືອທີ່ຖືກວິທີ ແລະ ທັນການນັ້ນ, ໄລຍະປີແຫ່ງການຮຽນຮູ້ ແລະ ການສື່ສານທີ່ດີທີ່ສຸດ (ແຕ່ເກີດຫາ ອາຍຸ 7 ປີ) ຈະບໍ່ສູນເສຍໄປ.

# ຈະຮູ້ໄດ້ແນວໃດ ຖ້າຫາກລູກຂອງທ່ານຫາກຕ້ອງການຄວາມຊ່ວຍເຫຼືອ

ເດັກເກີດໃໝ່ນັ້ນ ໄດ້ພັດທະນາເລີ່ມຈາກຝາຕີນຂອງພວກເຂົາຂຶ້ນມາ. ແຕ່ເດັກບາງຄົນຜັດມີການພັດທະນາທີ່ໄວກວ່າເດັກຄົນອື່ນ. ແຕ່ເດັກສ່ວນໃຫຍ່ແລ້ວແມ່ນມີການຈະເລີນເຕີບໂຕ ແລະ ພັດທະນາທັກສະໃໝ່ຢູ່ໃນໄລຍະອາຍຸດຽວກັນເຊັ່ນ: ເມື່ອພວກເຂົາມີອາຍຸ 2 ປີ, ເດັກເກືອບທັງໝົດສາມາດເວົ້າ ຫຼື ສາມາດໃຊ້ເຄື່ອງໝາຍໄດ້ 50 ຫາ 200 ຄຳສັບ. ເດັກທີ່ປົກກະຕິເມື່ອມີອາຍຸ 3 ປີ, ເຂົາຈະຮູ້ພາສາປະມານ 900 ຄຳສັບ ແລະ ຈະຮູ້ໄດ້ເຖິງ 1500 ຄຳສັບ ເມື່ອເຂົາມີອາຍຸໄດ້ 4 ປີ.

ສິ່ງສຳຄັນກໍ່ຄືເດັກໄດ້ສືບຕໍ່ຮຽນທັກສະໃໝ່ຕໍ່ໄປ, ແຕ່ຖ້າຫາກເດັກບໍ່ໄດ້ຮຽນຮູ້ທັກສະໃດໜຶ່ງຄືກັບເດັກຜູ້ອື່ນ ທີ່ມີອາຍຸຮຸ່ນດຽວກັນໄດ້ຮຽນຮູ້ນັ້ນ ເຖິງແມ່ນວ່າຈະໃຊ້ເວລາດົນມາແລ້ວກໍ່ຕາມ, ນີ້ຈະເປັນສັນຍານທີ່ສະແດງໃຫ້ເຫັນວ່າເຂົາອາດຈະມີບັນຫາ ຫຼື ຕ້ອງການຄວາມຊ່ວຍເຫຼືອໂດຍດ່ວນແລ້ວ.

ຕາຕະລາງຕໍ່ໄປນີ້ໄດ້ພັນລະນາກ່ຽວກັບທັກສະການສື່ສານຈຳນວນໜຶ່ງທີ່ເດັກມີການຮຽນຮູ້ ແລະ ເດັກເກືອບໝົດທຸກກໍ່ຮຽນຮູ້ສິ່ງເຫຼົ່ານັ້ນ. ຜູ້ທີ່ເປັນພໍ່ແມ່ຂອງເດັກສາມາດໃຊ້ຕາຕະລາງດັ່ງກ່າວນີ້ປຽບທຽບໄດ້ວ່າ: ມີທັກສະໃດແດ່ ທີ່ລູກຂອງຕົນເອງໄດ້ຮຽນຮູ້ແລ້ວ ແລະ ຍັງມີທັກສະໃດແດ່ ທີ່ເຂົາຍັງຕ້ອງການທີ່ຈະຮຽນຮູ້. ຈຶ່ງຕັດສິນໃຈວ່າ ກິດຈະກຳອັນໃດຄວນຈະເຮັດກ່ອນ, ໂດຍເລີ່ມຈາກການຖາມຕົວຂອງທ່ານເອງກ່ອນວ່າ "ລູກຂອງຂ້ອຍໄດ້ຮຽນຮູ້ທຸກສິ່ງທີ່ຄືກັນກັບເດັກຄົນອື່ນຜູ້ທີ່ມີອາຍຸຮຸ່ນດຽວກັນຮຽນຮູ້ຫຼືບໍ"?



**ອາຍຸ 3 ເດືອນ**



- ຈະມີການຕອບສະໜອງຕໍ່ສຽງ ແລະ ໃບໜ້າທີ່ເດັກຄຸ້ນເຄີຍ
- ມີປະຕິກິລິຍາຕໍ່ສຽງ ຫຼື ການເຄື່ອນເໜັງທີ່ໄວວາ.

**ອາຍຸ 6 ເດືອນ**

- ຈະສ້າງພາສານີ ຫຼື ສຽງແບບງ່າຍດາຍອອກມາ
- ຈະຫຼຽວເບິ່ງວັດຖຸທີ່ເຄື່ອນເໜັງ ຫລື ຕົ້ນກຳເນີດຂອງສຽງ.



**ອາຍຸ 1 ປີ**




- ເດັກຈະມີການປະສົມສຽງ ຫລື ແກວ່ງມືໄປມາ
- ເລີ່ມມີການຕັ້ງຊື່ໃຫ້ວັດຖຸຕ່າງໆ.
- ເຂົ້າໃຈ ຫລື ຕອບສະໜອງຕໍ່ກັບສັນຍະລັກ ຫລື ຄຳສັບທີ່ງ່າຍ
- ຮຽນແບບສັນຍະລັກດ່ຽວ

**ອາຍຸ 2 ປີ**




- ໃຊ້ສັນຍະລັກ ຫລື ຄຳສັບທີ່ງ່າຍດາຍ
- ໃຊ້ສັນຍະລັກ ຫລື ປະໂຫຍກທີ່ມີ 2-3 ຄຳສັບ
- ຮູ້ສັນຍະລັກ ຫລື ຄຳສັບແຕ່ 50 ຫາ 200 ຄຳສັບ

**ອາຍຸ 3 ປີ**




- ເຂົ້າໃຈພາສາທີ່ງ່າຍດາຍເກືອບທັງໝົດ
- ຮູ້ ແລະ ນຳໃຊ້ສັນຍະລັກ ຫລື ຄຳສັບແຕ່ 500 ຫາ 1000 ຄຳສັບ




**ອາຍຸ 5 ປີ**

- ຈະເວົ້າ ຫລື ເຮັດສັນຍະລັກກ່ຽວກັບສິ່ງທີ່ເຂົາໄດ້ເຫັນ.
- ມັກຕັ້ງຄຳຖາມ




## ທ່ານສາມາດຊ່ວຍເຫຼືອລູກຂອງທ່ານໃຫ້ມີການຮຽນຮູ້ໄດ້

ຖ້າຫາກທ່ານຄິດວ່າ ທັກສະການສື່ສານຂອງລູກທ່ານບໍ່ໄດ້ມີການພັດທະນາເທົ່າທີ່ຄວນ, ທ່ານສາມາດຊ່ວຍໃຫ້ເຂົາຮຽນຮູ້ໄດ້. ຜູ້ທີ່ເປັນພໍ່ແມ່ ມັກຄິດສະເໝີວ່າ ມີພຽງແຕ່ຜູ້ຊ່ຽວຊານເທົ່ານັ້ນ ຈຶ່ງສາມາດຊ່ວຍລູກຂອງຕົນໄດ້. ແຕ່ອາດຈະເປັນພໍ່ ຫລື ແມ່ ທີ່ຮູ້ຈັກລູກຂອງຕົນດີກວ່າຄົນອື່ນໆ, ສະນັ້ນ ທ່ານສາມາດເຮັດໃຫ້ມີການປ່ຽນແປງຢ່າງໃຫຍ່ຫລວງໃນພັດທະນາການຂອງເຂົາໄດ້.

## ໃນບົດທີ ໓ ຫາ ບົດທີ ໙, ທ່ານສາມາດຫາຂໍ້ມູນກ່ຽວກັບ:

- ການແນະນຳສຳຫລັບການສອນພາສາ (ບົດທີ 3)
- ທັກສະການສື່ສານພື້ນຖານ (ບົດທີ 4)
- ການຊອກຮູ້ວ່າລູກຂອງທ່ານສາມາດໄດ້ຍິນສິ່ງໃດແດ່ (ບົດທີ 5)
- ທັກສະການຟັງ (ບົດທີ 6)
- ການເລືອກ ແລະ ການຮຽນຮູ້ພາສາ (ບົດທີ 7)
- ການຮຽນຮູ້ພາສາສັນຍະລັກ (ບົດທີ 8)
- ການຮຽນຮູ້ພາສາເວົ້າ (ບົດທີ 9)

